ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສທຄ ພັດທະນາ ສື່ການຮຽນ-ການສອນແບບໃໝ່



ທ່ານ ປອ. ອາຄົມ ປຣະເສີດ ຫົວໜ້າສະຖາບັນການທະນາຄານ (ສທຄ) ໄດ້ໃຫ້ສຳພາດຕໍ່ຜູ້ສື່ຂ່າວ ຜ່ານລະບົບອອນລາຍ ໂດຍໄດ້ຢືນຢັນ ກ່ຽວກັບການຈັດຕັ້ງການຮຽນ-ການສອນໄລຍະການລະບາດຂອງພະຍາດໂຄວິດ-19 ທັງນີ້ ກໍ່ເພື່ອເຮັດໃຫ້ການຮຽນການ-ສອນ ສືບຕໍ່ດຳເນີນ, ສທຄ ຈຶ່ງໄດ້ໝູນໃຊ້ບັນດາເຄື່ອງມື ຫຼື ແອັບຕ່າງໆ ສິດສອນທາງໄກໃຫ້ນັກສຶກສາ ນັບຕັ້ງແຕ່ວັນທີ 26.04.2021 ເປັນຕົ້ນມາ ມີວິຊາສິດສອນທັງໝົດ 57 ວິຊາ, ມີອາຈານສອນ 84 ທ່ານ; ສທຄ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າວິທີ ແລະ ຈັດຕັ້ງປະຕິບັດການສອນທີ່ດຳເນີນໄປ ຕາມແຜນການຮຽນ-ການສອນ ໂດຍນຳໃຊ້ບັນດາສື່ຕ່າງໆ ຕາມຄວາມເໝາະສົມຂອງບົດຮຽນໃນແຕ່ລະວິຊາ ໃນນີ້ໄດ້ສົ່ງສະໄລ້ ບົດຮຽນ, ບົດຝຶກຫັດ, ວຽກບ້ານ ແລະກິດຈະກຳຕ່າງໆໃຫ້ນັກສຶກສາຄົ້ນຄວ້າ ແລະ ອະທິບາຍບົດຮຽນແບບອອນລາຍ, ອັດວິດີໂອ ໂດຍນຳໃຊ້ບັນດາໂປຼແກຼມ App Zoom, Facebook Live, Facebook group, Recorder screen Microsofe office, Whatsapp group, Google classroom, Ice cream screen recordor, E-mail, Youtube, Fastone capture video, Microsoft teams, Wechat, Line ແລະ ອື່ນໆ.

ຜ່ານການຕິດຕາມແຕ່ລະຂະແໜງ ສາມາດສະຫຼຸບໄດ້ໂດຍພື້ນຖານຄື: ບັນດາລາຍວິຊາທັງໝົດ ທີ່ຈັດຕັ້ງປະຕິບັດສິດສອນຕາມຕາຕະລາງສອນໃນພາກຮຽນທີ 2 ສົກສຶກສາ 2020-2021 ທັງໝົດຈຳນວນ 57 ວິຊາ ແລະ ມີອາຈານສອນຕົວຈິງ 84 ທ່ານ (ຮັບເຊີນ 15 ທ່ານ) ໃນນັ້ນ ມີການຮຽນ-ການສອນອອນລາຍ ແລະສົ່ງເອກະສານໃຫ້ນັກສຶກສາ 79 ທ່ານ, ອາຈານ ທີ່ບໍ່ໄດ້ສອນອອນລາຍ ແຕ່ສົ່ງບົດຮຽນໃຫ້ນັກສຶກສາເທົ່ານັ້ນ ມີ 5 ທ່ານ.

ເຖິງວ່າ: ພະຍາດໂຄວິດຈະລະບາດກໍ່ຕາມ, ແຕ່ ສທຄ ຍັງມີຄວາມພະຍາຍາມປັບປຸງການຮຽນການ-ສອນແບບໃໝ່ ໃຫ້ເໝາະກັບສະຖານະການ; ຂະນະດຽວກັນ, ກໍ່ເລັ່ງໃສ່ວຽກງານຄົ້ນຄວ້າ, ພັດທະນາຫຼັກສູດ ແລະສື່ການຮຽນ-ການສອນ ໂດຍການເຫັນດີຈາກກະຊວງສຶກສາທິການ ແລະກິລາ; ກອງປະຊຸມສະພາ ວິຊາການສະໄໝວິສາມັນ ຄັ້ງທີ I ປະຈຳປີ 2021 ໄດ້ຮັບຮອງຜົນສຳເລັດການສ້າງ, ຮຽບຮຽງປຶ້ມຕຳລາ ແລະປຶ້ມບົດຝຶກຫັດ 2 ວິຊາ; ສຳເລັດການຂຽນບົດປະເມີນຫຼັກສູດການຮຽນ-ການສອນຂອງນັກສຶກສາຕໍ່ເນື່ອງ ປະລິນຍາຕີ ຣຸ່ນ 17; ສຳເລັດຂຽນບົດຄົ້ນຄວ້າຄວາມຕ້ອງການເຂົ້າຮຽນ, ວິເຄາະຄວາມເປັນໄປໄດ້ໃນການເປີດສອນຫຼັກສູດ ປະລິນຍາໂທ ສາຂາການເງິນ-ການທະນາຄານ ແລະ ປັບປຸງຫຼັກສູດ ຕາມມາດຕະຖານຫຼັກສູດແຫ່ງຊາດ; ຕິດຕາມ ແລະ ປະເມີນຜົນແຜນການຮຽນ-ການສອນທຽບໃສ່ການສອນຕົວຈິງຂອງບັນດາອາຈານ ແລະ ສ້າງປະຕິທິນການສຶກສາ ສົກ 2021-2022.

ສໍາລັບວຽກງານການຮຽນ-ການສອນ ກໍ່ໄດ້ກະກຽມຄວາມພ້ອມເປີດຮັບສະໝັກນັກສຶກສາເຂົ້າຮຽນໃນຫຼັກສູດປະລິນຍາຕີ ສາຂາການບັນຊີແລະກວດສອບ ຊຶ່ງຈະປະກາດຮັບນັກສຶກສາ ພ້ອມກັບຮັບນັກສຶກສາໃໝ່ ສົກສຶກສາ 2021-2022; ຈັດການຮຽນ-ການສອນວິຊາປ້ອງກັນຊາດ ໃຫ້ນັກສຶກສາ ຮຸ່ນ 19 ຈໍານວນ 930 ຄົນ; ປະຕິບັດການຮຽນ-ການສອນ, ການກວດກາກາງພາກ, ການສອບເສັງພາກຮຽນ II; ກະກຽມຄວາມພ້ອມປ້ອງກັນບົດໂຄງການຈົບຊັ້ນນັກສຶກສາ ຈໍານວນ 77 ກຸ່ມ ແລະການສອບເສັງຈົບຊັ້ນ; ຜ່ານການປະເມີນຜົນການສິດສອນຂອງອາຈານ ສທຄ 74 ຄົນ ປະຈໍາພາກຮຽນ I ສົກສຶກສາ 2020-2021 ຈາກນັກສຶກສາ ເຫັນວ່າ: ປະເພດດີ ກວມເອົາ 97,30%, ກາງ 2,70%; ອາຈານ 3 ຄົນ ສໍາເລັດການເຂົ້າຮ່ວມຖອດຖອນບົດຮຽນຕົວຈິງການກວດກາສະຖາບັນການເງິນຈຸລະພາກ ຕາມແຜນການລົງກວດກາຂອງກົມຄຸ້ມຄອງສະຖາບັນການເງິນ ທຫລ.

ວຽກງານສົ່ງເສີມຄົ້ນຄວ້າວິທະຍາສາດ ທີ່ໄດ້ຮັບອະນຸມັດໃນປີ 2020 ຈໍານວນ 4 ຫົວຂໍ້, ປະຈຸບັນປະຕິບັດໄດ້ 30% ເນື່ອງຈາກລໍຖ້າຮັບອະນຸມັດແຜນງົບປະມານ ປະຈໍາປີ 2021 ແລະ ຖືກໄລຍະການແຜ່ລະບາດພະຍາດໂຄວິດ-19 ບໍ່ສາມາດເກັບຂໍ້ມູນ; ປີ 2021 ສທຄ ໄດ້ຮັບອຸນະມັດແຜນຝຶກອົບຮົມ 7 ຫົວຂໍ້, ໃນນີ້ປະຕິບັດສໍາເລັດ 2 ຫົວຂໍ້ ກວມເອົາ 28,57%; ນອກນັ້ນ, ຍັງປະຕິບັດນອກແຜນ 7 ຫົວຂໍ້ ຄື: ຈັດຝຶກອົບຮົມດ້ານວິຊາການ 1 ຫົວຂໍ້, ໃຫ້ແກ່ພະນັກງານ-ອາຈານ ສທຄ 4 ຫົວຂໍ້ແລະໃຫ້ນັກສຶກສາ 2 ຫົວຂໍ້ມີຜູ້ເຂົ້າຮ່ວມ 354 ເທື່ອຄົນ; ມີອາຈານຮ່ວມເປັນນັກວິທະຍາກອນ ຢູ່ເມືອງແກ້ວອຸດົມ, ແຂວງວຽງຈັນ 1 ຄັ້ງ; ສໍາເລັດປັບປຸງຫຼັກສູດ What's a Bank 3 ລະດັບ; ນໍາພານັກສຶກສາຝຶກງານຢູ່ທະນາຄານຈໍາລອງ ຊຸດທີ 1 ມີ 112 ຄົນ ແລະ ພັດທະນາວຽກງານຫ້ອງສະໝຸດ ສທຄ ໃຫ້ມີຄວາມທັນສະໄໝປະຕິ ບັດໄດ້ 34% ຂອງແຜນການປີ.

ແຜນການ 6 ເດືອນທ້າຍປີ 2021; ທ່ານ ປອ. ອາຄົມ ປຣະເສີດ ເນັ້ນວ່າ: ຈະສືບຕໍ່ຕິດຕາມ ແລະປະເມີນຜົນການປະຕິບັດວຽກງານຂອງອາຈານສອນ; ສືບຕໍ່ກະກຽມຄວາມພ້ອມໃນການສ້າງຫຼັກສູດປະລິນຍາໂທ ສາຂາການເງິນ-ການທະນາຄານ; ສືບຕໍ່ສ້າງປະຕິທິນການສຶກສາ ສົກ 2021-2022; ສືບຕໍ່ປັບປຸງເນື້ອໃນຕໍາລາການຮຽນ-ການສອນ ແລະ ສົ່ງເສີມໃຫ້ອາຈານ ສ້າງ, ຮຽບຮຽງປຶ້ມຕໍາລາ ແລະປຶ້ມ ບົດຝຶກຫັດຮັບໃຊ້ການຮຽນການສອນຕາມແຜນການປະຈໍາປີ; ເປີດຮັບສະໝັກນັກສຶກສາເຂົ້າຮຽນໃນຫຼັກສູດ ປະລິນຍາຕີສາຂາບັນຊີ ແລະ ກວດສອບ, ຈັດຕັ້ງການຮຽນ-ການສອນຕາມປະຕິທິນການສຶກສາ (ປ້ອງກັນບົດໂຄງການຈົບຊັ້ນ, ຈັດສອບເສັງປະຈໍາພາກຮຽນ, ສອບເສັງຈົບຊັ້ນ...), ປະເມີນການສິດສອນຂອງອາຈານໃນພາກຮຽນ II ສົກສຶກສາ 2020-2021; ສົ່ງເສີມນັກສຶກສາໃຫ້ມີການໂຕ້ວາ ທີ, ຖາມຕອບວິທະຍາສາດ; ຈັດສໍາມະນາແລກປ່ຽນດ້ານວິຊາການໃນຫົວຂໍ້ທີ່ຕິດພັນກັບຂະແໜງການເງິນ-ການທະນາຄານ ແລະ ຈັດຝຶກອົບຮົມວິຊາຄູໃຫ້ແກ່ພະນັກງານ, ອາຈານ ສທຄ; ສືບຕໍ່ຂຽນບົດຄົ້ນຄວ້າວິໄຈທີ່ໄດ້ຮັບອະນຸມັດໃນປີ 2020 ຈໍານວນ 4 ຫົວຂໍ້ ແລະຫົວຂໍ້ອື່ນໆຈໍານວນໜຶ່ງ ທີ່ຕິດພັນກັບຂະແໜງການເງິນ-ການທະນາຄານ; ສືບຕໍ່ຈັດຝຶກອົບຮົມຫົວຂໍ້ຕ່າງໆ ຕາມແຜນປະຈໍາປີ 2021.

**# ຂ່າວ: ຣັດສະໝີ ດວງສັດຈະ**

**ຢູ່ເມືອງລາວໃຊ້ເງິນກີບລາວ**